| DES MOINES, IOWA | ປື້ມຄູ່ມືທົ່ວອົງການ: ວຽກບໍລິຫານທົ່ວໄປ | |
|---|---|---|
| | ວັນທີເລີ່ມຕົ້ນ: 11/1996 | ເລກທີ: A-1006 |
| | ການທົບທວນ/ການປັບປຸງແກ້ໄຂຄັ້ງສຸດທ້າຍ: | 06/2019 ໜ້າ 1 |
| ເລື່ອງ: | ໂຄງການດູແລເບິ່ງແຍງຊຸມຊົນ ແລະ ການຊ່ວຍເຫຼືອດ້ານການເງິນຂັ້ນຮ້າຍແຮງຂອງ Broadlawns | |

I. ນະໂຍບາຍ

ສູນການແພດ Broadlawns ຈະສະໜອງການຊ່ວຍເຫຼືອດ້ານການເງິນສໍາລັບການດູແລທາງການແພດ ແລະ ການຢາໃຫ້ກັບຜູ້ອາໄສທີ່ຍາກຈົນ ທາງການເງິນ ແລະ ບັນລຸເງື່ອນໄຂສະເພາະ ຫຼື ປະສົບກັບເຫດການທາງການແພດທີ່ມີຜົນກະທົບດ້ານການເງິນທີ່ຮ້າຍແຮງຕາມ ເຊິ່ງໄດ້ກໍານົດ ໄວ້ໃນນະໂຍບາຍນີ້.

ນະໂຍບາຍນີ້ແມ່ນຖືກຈັດການພາຍໃຕ້ຊື່ "ໂຄງການດູແລຊຸມຊົນຂອງ Broadlawns ແລະ ການຊ່ວຍເຫຼືອທາງການເງິນຂັ້ນຮ້າຍແຮງ" ແລະ ຖືກປະຕິບັດນໍາໃຊ້ດັ່ງລຸ່ມນີ້:

II. ຈຸດປະສົງ

ນະໂຍບາຍນີ້ຈັດຕັ້ງໂຄງຮ່າງໃຫ້ສູນການແພດ Broadlawns:

(1) ລະບຸຄົນເຈັບທີ່ອາດມີຄຸນສົມບັດສໍາລັບການຊ່ວຍເຫຼືອດ້ານການເງິນ.
(2) ສະໜອງການຊ່ວຍເຫຼືອດ້ານການເງິນໃຫ້ກັບຄົນເຈັບພາຍໃນຊຸມຊົນ.
(3) ຊີ້ດໃຊ້ການຊ່ວຍເຫຼືອດ້ານການເງິນ ໂດຍສອດຄ່ອງລະບຽບຫຼັກການຂອງລັດ Iowa ແລະ ນະໂຍບາຍຂອງ ໂຄງການການດູແລຊຸມຊົນຂອງ Broadlawns ແລະ ວິທີດໍາເນີນການຂອງ ສູນການແພດ Broadlawns.
(4) ເພື່ອໃຫ້ສອດຄ່ອງກັບພາກທີ 501(r) ຂອງຫຼັກການລາຍຮັບພາຍໃນ ແລະ ເພື່ອຮັກສາສະຖານະການຍົກເວັ້ນພາສີ ຂອງອົງກອນ, ສູນການແພດ Broadlawns ໄດ້ນໍາໃຊ້ນະໂຍບາຍນີ້ ແລະ ຈະເປີດເຜີຍຢ່າງກວ້າງຂວາງ, ສະໜອງ ຂໍ້ສະຫຼຸບໃນພາສາທໍາມະດາ ແລະ ມີຢູ່ໃນຫຼາຍພາສາ. ນອກຈາກນັ້ນ, ອົງກອນຈະໂພສໃນເວບໄຊ້ຂອງຕົນກ່ຽວກັບ ລາຍການຂອງຜູ້ໃຫ້ບໍລິການດ້ານການດູແລສຸຂະພາບ ເຊິ່ງມີການບໍລິການທີ່ຂຶ້ນກັບນະໂຍບາຍນີ້.

ສູນການແພດ Broadlawns ອາດຍອມຮັບຄົນເຈັບໃຫ້ມີສິດພາຍໃຕ້ ໂຄງການການດູແລຊຸມຊົນຂອງ Broadlawns ຜູ້ທີ່ບັນລຸບັນທັດຖານ ຂອງການມີສິດ ຕາມທີ່ໄດ້ກໍານົດໄວ້ຂ້າງລຸ່ມໃນນະໂຍບາຍນີ້.

III. ນິຍາມ

A. **ການຢູ່ອາໄສ:** ສູນການແພດ Broadlawns ກໍານົດຜູ້ອາໄສວ່າ ເປັນບຸກຄົນທີ່ມີສັນຊາດສະຫະລັດອາເມຣິກາ ຫຼື ມີສະຖານະຜູ້ອາໄສ ຕ່າງດ້າວທີ່ຖືກຈົດທະບຽນ ເຊິ່ງອາໄສຢ່າງເປັນອົດສະຫຼະໃນລັດ Iowa ໂດຍມີເຈດຕະນາທີ່ຈະສືບຕໍ່ອາໄສພາຍໃນເຂດປົກຄອງທີ່ລະບຸ ໄວ້ໃນລາຍການ. ບຸກຄົນໃດໜຶ່ງບໍ່ຈໍາເປັນຕ້ອງອາໄສໃນເຂດປົກຄອງ Polk ເປັນໄລຍະເວລາສະເພາະໃດໜຶ່ງກ່ອນການປະກາດວ່າຢູ່ອາໄສ.

B. **ຈໍານວນເງິນໂດຍທົ່ວໄປທີ່ຮຽກເກັບຈາກບຸກຄົນທີ່ມີປະກັນໄພ (AGB):** ວິທີການດັ່ງຕໍ່ໄປນີ້ແມ່ນນໍາໃຊ້ເພື່ອຄິດໄລ່ຈໍານວນເງິນໂດຍທົ່ວໄປທີ່ຮຽກເກັບຈາກບຸກຄົນທີ່ມີປະກັນໄພ.

AGB % = (ຜົນລວມຂອງຈໍານວນເງິນທັງໝົດທີ່ໄດ້ຮັບອະນຸຍາດໂດຍຜູ້ຊໍາລະ Medicare + ຜົນລວມຂອງຈໍານວນເງິນທັງໝົດທີ່ໄດ້ຮັບອະນຸຍາດໂດຍຜູ້ຮັບປະກັນໄພດ້ານສຸຂະພາບພາກເອກະຊົນ + ຜົນລວມຂອງຈໍານວນເງິນທັງໝົດທີ່ໄດ້ຮັບອະນຸຍາດໂດຍຜູ້ຊໍາລະ Medicaid ໃນລະຫວ່າງຊ່ວງເວລາ 12 ເດືອນຍ້ອນຫຼັງ) / (ຜົນລວມຂອງລວມຍອດຄ່າໃຊ້ຈ່າຍສໍາລັບຂໍ້ຮຽກຮ້ອງດຽວກັນ).

AGB = (ລວມຍອດຄ່າໃຊ້ຈ່າຍສໍາລັບການດູແລທາງການແພດທີ່ຈໍາເປັນ ຫຼື ການດູແລທາງການແພດສຸກເສີນ) X AGB%.

AGB% ຈະຖືກຄິດໄລ່ ແລະ ອັບເດດບົນພື້ນຖານປະຈໍາປີ ຕາມທີ່ໄດ້ລະບຸໄວ້ໃນພາກສ່ວນຕິດຄັດ ກ ຂອງນະໂຍບາຍນີ້.

C. **ການດູແລທາງການແພດທີ່ຈຳເປັນ:** ການບໍລິການທີ່ສອດຄ່ອງກັບການກວດພະຍາດ ແລະ ການປິ່ນປົວໂຣກຂອງຄົນເຈັບ, ສອດຄ່ອງກັບ ມາດຕະຖານການປະຕິບັດທາງການແພດທີ່ເໝາະສົມ, ຈຳເປັນເພື່ອສະໜອງຄວາມຕ້ອງການທາງການແພດຂອງຄົນເຈັບ ແລະ ເປັນເຫດຜົນ ທີ່ນອກເໜືອຄວາມສະດວກສະບາຍຂອງຄົນເຈັບ ຫຼື ແພດຂອງຄົນເຈັບ ຫຼື ຜູ້ໃຫ້ຄວາມດູແລ ແລະ ການບໍລິການປະເພດທີ່ມີຄ່າໃຊ້ຈ່າຍ ໜ້ອຍສຸດ ເຊິ່ງຈະສະໜອງຄວາມຕ້ອງການທາງການແພດຂອງຄົນເຈັບຢ່າງສົມເຫດສົມຜົນ.

D. **ນະໂຍບາຍການດູແລທາງການແພດສຸກເສີນ:** ຕາມທີ່ໄດ້ລະບຸໄວ້ໃນ ກົດໝາຍວ່າດ້ວຍ ການປິ່ນປົວທາງການແພດສຸກເສີນ ແລະ ການເຈັບ ທ້ອງອອກລູກ (EMTALA), ສະພາວະທາງການແພດທີ່ສະແດງອອກໂດຍອາການສາຫັດທີ່ມີຄວາມຮຸນແຮງພຽງພໍ ແລະ ການຂາດການດູ ແລທາງການແພດຢ່າງຮີບດ່ວນແມ່ນຖືກຄາດຫວັງຢ່າງສົມເຫດສົມຜົນວ່າຈະສົ່ງຜົນໃຫ້ສຸຂະພາບຂອງຄົນເຈັບຢູ່ໃນອັນຕະລາຍຢ່າງຮຸນແຮງ, ການເສື່ອມເສຍຢ່າງຮຸນແຮງຕໍ່ການເຮັດວຽກຂອງຮ່າງກາຍ ຫຼື ການມີບັນຫາຢ່າງຮຸນແຮງຂອງສ່ວນໃດໜຶ່ງຂອງອະໄວຍະວະຮ່າງກາຍ. ມັນຍັງລວມເຖິງຜູ້ຍິງຖືພາທີ່ກຳລັງປະສົບກັບການບີບຕົວຂອງມົດລູກ.

## IV. <u>ວິທີດຳເນີນການ</u>

### A. ການມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນ

ການຊ່ວຍເຫຼືອທາງການເງິນແມ່ນມີໃຫ້ກັບການດູແລທາງການແພດທີ່ຈຳເປັນ ແລະ ການດູແລທາງການແພດສຸກເສີນ ໂດຍສະໜອງໃຫ້ກັບຄົນ ເຈັບທີ່ບັນລຸ ເງື່ອນໄຂຂອງການມີສິດສຳລັບໂຄງການດູແລຊຸມຊົນຂອງ Broadlawns ແລະ ໂຄງການຊ່ວຍເຫຼືອທາງການເງິນຂັ້ນຮ້າຍແຮງ.

### B. ວິທີດຳເນີນການໃນການອະນຸມັດ:

ສູນການແພດ Broadlawns ຈະເຮັດແບບຟອມອະນຸມັດການຊ່ວຍເຫຼືອດ້ານການເງິນໃຫ້ຄົບຖ້ວນ ("ແບບຟອມອະນຸມັດ") ໃຫ້ກັບຄົນເຈັບແຕ່ ລະຄົນທີ່ໄດ້ຮັບອະນຸມັດໃຫ້ມີສິດຢູ່ພາຍໃຕ້ ໂຄງການດູແລຊຸມຊົນຂອງ Broadlawns. ແບບຟອມອະນຸມັດພິຈາລະນາເອກະສານຂອງການ ທົບທວນດ້ານການບໍລິຫານ ແລະ ຂັ້ນຕອນການອະນຸມັດທີ່ ສູນການແພດ Broadlawns ນຳໃຊ້ເພື່ອອະນຸມັດການມີສິດໃຫ້ຢູ່ພາຍໃຕ້ ໂຄງການດູແລຊຸມຊົນຂອງ Broadlawns.

### C. ການກຳນົດລາຍຮັບ

ຍອດລາຍຮັບແມ່ນຈະຖືກໃຊ້ເພື່ອກຳນົດການມີສິດ. ການຄິດໄລ່ຍອດລາຍຮັບຈະສອດຄ່ອງກັບໂຄງການ Medicaid ຂອງລັດ Iowa. ລາຍຮັບສຳລັບສະມາຊິກທຸກຄົນໃນຄົວເຮືອນ ແລະ ພາກສ່ວນທີ່ຮັບຜິດຊອບຕໍ່ກົດໝາຍເຊິ່ງບໍ່ໄດ້ຢູ່ໃນຄົວເຮືອນຈະຖືວ່າຢູ່ໃນການ ກຳນົດລະດັບຂອງລາຍຮັບ.

ລາຍຮັບລວມເຖິງ ແຕ່ບໍ່ຈຳກັດ ຄ່າຈ້າງ ແລະ ເງິນເດືອນ, ຜົນປະໂຫຍດຈາກຄວາມເສຍອົງຄະ, ຜົນປະໂຫຍດຈາກການບໍານານ ຫຼື ເບັ້ຍບໍານານ, ລາຍຮັບຈາກຄ່າເຊົ່າ, ຄ່າທຳນຽມນ້ຳມັນ ແລະ ແກສ, ຄ່າຕອບແທນການວ່າງວຽກ, ຜົນປະໂຫຍດຈາກ VA, ການສົ່ງເສີມເດັກນ້ອຍ, ເງິນຄ່າລ້ຽງ ເມຍທີ່ຮ້າງຈາກຜົວ, ຜົນປະໂຫຍດ, ເງິນປັນຜົນຈາກຫຸ້ນ, ຄ່າຕອບແທນຂອງພະນັກງານ, ການບໍລິຈາກສິ່ງເສີມດ້ວຍຄວາມເມດຕາ ແລະ ອື່ນໆ.

ການບໍລິຈາກສິ່ງເສີມດ້ວຍຄວາມເມດຕາແມ່ນຊັບພະຍາກອນ/ຜົນປະໂຫຍດທີ່ສະໜອງໂດຍບໍ່ມີການພິຈາລະນາ. ຄຸນຄ່າທີ່ສົມເຫດສົມຜົນ ຈະຖືກໃສ່ໃນຊັບພະຍາກອນ/ຜົນປະໂຫຍດເຫຼົ່ານີ້ ໂດຍພິຈາລະນາທຸກປັດໃຈທີ່ກ່ຽວຂ້ອງ.

ຕາປະທັບອາຫານແມ່ນຖືກຍົກເວັ້ນຈາກລາຍຮັບ ເພື່ອຈຸດປະສົງຂອງການກຳນົດການມີສິດ.

ຜູ້ສະໝັກທີ່ມີລາຍຮັບລວມກັນຕໍ່າກວ່າ ຫຼື ເທົ່າກັບຂອບເຂດຂອງລາຍຮັບຈະໄດ້ຮັບສິດສຳລັບ ໂຄງການດູແລຊຸມຊົນຂອງ Broadlawns.

ການຄິດໄລ່ລາຍຮັບ: ສຳລັບຜູ້ໃຫຍ່, ຄຳສັບ "ລາຍຮັບທັງໝົດປະຈຳປີ" ໃນໃບສະໝັກສຳລັບການຊ່ວຍເຫຼືອໝາຍເຖິງ ຜົນລວມຂອງຍອດ ລາຍຮັບປະຈຳປີ ("ລາຍຮັບ") ຂອງຄົນເຈັບແຕ່ລະຄົນ ແລະ ຜົວເມຍຂອງຄົນເຈັບ.
ຖ້າຄົນເຈັບເປັນຜູ້ຍັງບໍ່ກະສຽນ, ຄຳສັບ "ລາຍຮັບທັງໝົດປະຈຳປີ" ໃນໃບສະໝັກສຳລັບການຊ່ວຍເຫຼືອຂອງ Broadlawns ໝາຍເຖິງລາຍຮັບຈາກຄົນເຈັບ, ແມ່ຂອງຄົນເຈັບ ແລະ ພໍ່ຂອງຄົນເຈັບ.

**D. ຕາຕະລາງຂອບເຂດລາຍຮັບ**

ຕາມທີ່ກຳນົດໂດຍສອດຄ່ອງກັບສະໝັກສຳລັບການຊ່ວຍເຫຼືອຂອງ Broadlawns, ສູນການແພດ Broadlawns ອາດຈຳແນກຄົນເຈັບທັງໝົດ ທີ່ມີລາຍຮັບໜ້ອຍກວ່າ ຫຼື ເທົ່າກັບ 400% ຂອງນະໂຍບາຍຄວາມທຸກຍາກ ທີ່ໄດ້ອັບເດດປະຈຳປີໃນ ທະບຽນລັດຖະບານກາງ ໂດຍກະຊວງ ສຸຂະພາບ ແລະ ການບໍລິການມະນຸດຂອງ ສະຫະລັດອາເມຣິກາ ("ນະໂຍບາຍລາຍຮັບທຸກຍາກແຫ່ງລັດຖະບານກາງ") ຕາມທີ່ມີສິດຢູ່ພາຍໃຕ້ ໂຄງການດູແລຊຸມຊົນຂອງ Broadlawns, ຖືວ່າບັນທັດຖານຂອງການມີສິດເຊິ່ງມີຜົນຢູ່ບ່ອນອື່ນໃນນະໂຍບາຍ ນີ້ຖືກບັນລຸ.

ການດູແລກຸສົນສົມບູນຈະຖືກສະໜອງໃຫ້ກັບຄົນເຈັບທີ່ມີປະກັນໄພບໍ່ພຽງພໍ ແລະ ບໍ່ມີປະກັນໄພເລີຍ ເຊິ່ງມີລາຍຮັບ 300% ຫຼື ຕ່ຳກວ່ານະໂຍບາຍລາຍຮັບທຸກຍາກແຫ່ງລັດຖະບານການ.

ສຳລັບຄົນເຈັບທີ່ມີປະກັນໄພບໍ່ພຽງພໍ ແລະ ບໍ່ມີປະກັນໄພ ເຊິ່ງມີລາຍຮັບລະຫວ່າງ 301% ແລະ 400% ຂອງນະໂບບາຍລາຍຮັບທຸກຍາກ ແຫ່ງລັດຖະບານກາງ,
ສ່ວນຫຼຸດແມ່ນຈະຖືກສະໜອງໃຫ້ເພື່ອຈຳກັດພັນທະການຊຳລະຂອງຄົນເຈັບໃຫ້ຢູ່ໃນຈຳນວນຂອງຍອດບັນຊີຂອງຄົນເຈັບ ຫຼັງຈາກຫັກເປີເຊັນສ່ວນຫຼຸດທີ່ຖືກນຳໃຊ້ກັບລາຍຮັບຂອງຄົນເຈັບ ຕາມທີ່ໄດ້ລະບຸໄວ້ໃນຕາຕະລາງຂ້າງລຸ່ມນີ້:

| ສ່ວນຫຼຸດ % | ນະໂຍບາຍລາຍຮັບທຸກຍາກແຫ່ງລັດຖະບານກາງຂອງປີປັດຈຸບັນສຳລັບຂະໜາດຄອບຄົວ |
|---|---|
| 100% | ລາຍຮັບຄອບຄົວໜ້ອຍກວ່າ ຫຼື ເທົ່າກັບ 300% ຂອງ FPIG |
| AGB ເທົ່ານັ້ນ | ລາຍຮັບຄອບຄົວແມ່ນ 301% ຫາ 400% ຂອງ FPIG |

ຄົນເຈັບທີ່ບໍ່ມີປະກັນໄພ ເຊິ່ງມີລາຍຮັບລະຫວ່າງ 133% ແລ 400% ຂອງນະໂຍບາຍລາຍຮັບທຸກຍາກຂອງລັດຖະບານກາງ ແລະ ບໍ່ສາມາດ ລົງທະບຽນໃນການແລກປ່ຽນປະກັນໄພຂອງສະຖານຕະຫຼາດໃນລັດ Iowa ກ່ອນກຳນົດເວລາການລົງທະບຽນຈະມີສິດສຳລັບນະໂຍບາຍນີ້, ແຕ່ຈຳເປັນຕ້ອງລົງທະບຽນໃນຊ່ວງໄລຍະການລົງທະບຽນດັ່ງຕໍ່ໄປນີ້. ຄວາມລົ້ມເຫຼວທີ່ຈະລົງທະບຽນໃນລະຫວ່າງຊ່ວງໄລຍະການລົງທະບຽນ ດັ່ງຕໍ່ໄປນີ້ອາດສົ່ງຜົນໃນການສູນເສຍການມີສິດ. ບຸກຄົນທີ່ສູນເສຍການຄຸ້ມຄອງເນື່ອງຈາກການລົ້ມເຫຼວທີ່ຈະຊຳລະຄ່າປະກັນໄພໃນການແລກ ປ່ຽນປະກັນໄພຂອງສະຖານຕະຫຼາດໃນລັດ Iowa ແມ່ນບໍ່ມີສິດສຳລັບໂຄງການນີ້.

ນະໂຍບາຍນີ້ແມ່ນໃຊ້ໄດ້ກັບການຮັບຜິດຊອບສ່ວນແລກຂອງຄົນເຈັບ. ໃຊ້ບໍ່ໄດ້ກັບສ່ວນຫຼຸດທີ່ລະບຸໄວ້ພາຍໃຕ້ A-1015 ສ່ວນຫຼຸດຊຳລະດ້ວຍ ຕົນເອງສຳລັບການຊຳລະທັນທີ.

BMC ອາດຍົກເວັ້ນ ຫຼື ຫຼຸດຜ່ອນການຮັບຜິດຊອບສ່ວນແລກຂອງການປະກັນໄພຮ່ວມຂອງ Medicare ແລະ Medicaid ເທົ່ານັ້ນ ໂດຍອີງຕາມຄວາມຕ້ອງການດ້ານການເງິນ ຖ້າບັນລຸຕາມເງື່ອນໄຂດັ່ງຕໍ່ໄປນີ້:

- ໃບສະຫຼະສິດ ຫຼື ສ່ວນຫຼຸດແມ່ນບໍ່ໄດ້ໂຄສະນາ.
  (ມັນເປັນເລື່ອງເໝາະສົມທີ່ຈະໃຫ້ຄຳແນະນຳກັບຄົນເຈັບບົນພື້ນຖານສ່ວນບຸກຄົນວ່າ ໃບສະຫຼະສິດຂອງການຊຳລະຮ່ວມ ຫຼື ການຮັບຜິດຊອບສ່ວນແລກໃນເຫດການຄວາມຈຳເປັນທາງການເງິນທີ່ເປັນໄປໄດ້ ແລະ ຄົນເຈັບ ອາດສະໝັກສຳລັບຜົນປະໂຫຍດດັ່ງກ່າວໃນເວລາ ຫຼື ທັນທີກ່ອນສະໜອງການປິ່ນປົວ.)
- ສ່ວນຫຼຸດບໍ່ໄດ້ຖືກສະເໜີເປັນປະຈຳ,
  ແຕ່ໃຫ້ກັບຄົນເຈັບເທົ່ານັ້ນທີ່ມີຄວາມຕ້ອງການດ້ານການເງິນທີ່ປາຖະໜາຢາກລົງສະໝັກ.

ຄົນເຈັບທີ່ໄດ້ຮັບປະກັນທີ່ບັນລຸເງື່ອນໄຂການຊ່ວຍເຫຼືອດ້ານການເງິນອາດໃຫ້ພັນທະສຳລັບຈຳນວນເງິນສຳລັບການປະກັນໄພຮ່ວມ ຫຼື ການຮັບຜິດ ຊອບສ່ວນແລກ ອີງຕາມນະໂຍບາຍນີ້.

ສຳລັບຄົນເຈັບທີ່ບໍ່ມີຄຸນສົມບັດສຳລັບການຊ່ວຍເຫຼືອດ້ານການເງິນພາຍໃຕ້ນະໂຍບາຍການດູແລຊຸມຊົນຂອງ Broadlawns ອາດມີສິດຢູ່ພາຍໃຕ້ ການຊ່ວຍເຫຼືອດ້ານການເງິນຂັ້ນຮ້າຍແຮງ, ຖືວ່າໄດ້ປະຕິບັດຕາມບັນທັດຖານຂອງການມີສິດເຊິ່ງມີພົນຢູ່ບ່ອນອື່ນໃນນະໂຍບາຍນີ້.

**E. ການຢັ້ງຢືນລາຍຮັບ** :
ສູນການແພດ Broadlawns ຈະຮ້ອງຂໍໃຫ້ຄົນເຈັບສະໜອງການຢັ້ງຢືນລາຍຮັບ.

i. **ເອກະສານທີ່ຢັ້ງຢືນລາຍຮັບ:** ລາຍຮັບອາດຖືກຢັ້ງຢືນຜ່ານທາງກົນໄກດັ່ງຕໍ່ໄປນີ້: ແບບຟອມ IRS W-2, ຄຳຖະແຫຼງຂອງຄ່າຈ້າງ ແລະ ລາຍຮັບ; ການສັ່ງເງິນຊຳລະຄ່າຈ້າງ; ພົນກຳໄລພາສີ; ຄວາມປອດໄພສັງຄົມ, ຄ່າຕອບແທນຂອງພະນັກງານ ຫຼື ຈົດໝາຍກຳນົດ ຄ່າຕອບແທນການວ່າງວຽກ; ການຢັ້ງຢືນທາງໂທລະສັບໂດຍຜູ້ຈ້າງງານກ່ຽວກັບຍອດລາຍຮັບປະຈຳປີຂອງຄົນເຈັບ; ຫຼື ໃບຢັ້ງຢືນ ຂອງທະນາຄານ. ຖ້າຄົນເຈັບບໍ່ໄດ້ສະໜອງເອກະສານນີ້, ສູນການແພດ Broadlawns ຈະສົ່ງຈົດໝາຍຮ້ອງຂໍເອກະສານໃຫ້ກັບຄົນເຈັບ.

ii. **ເອກະສານບໍ່ມີຢູ່:** ໃນກໍລະນີທີ່ຄົນເຈັບບໍ່ສາມາດສະໜອງເອກະສານເພື່ອຢັ້ງຢືນລາຍຮັບ, ສູນການແພດ Broadlawns ອາດຢັ້ງຢືນລາຍຮັບຂອງຄົນເຈັບ (i) ໂດຍໃຫ້ຄົນເຈັບເຊັນໃບສະໝັກສຳລັບການຊ່ວຍເຫຼືອເພື່ອຢືນຢັນຄວາມແທ້ຈິງຂອງ ຂໍ້ມູນລາຍຮັບທີ່ສະໜອງ ແລະ/ຫຼື ຜ່ານທາງຂະບວນການຢັ້ງຢືນພາຍນອກທີ່ຂໍຮ້ອງໂດຍ ສູນການແພດ ຜ່ານທາງຜູ້ຂາຍທີ່ໄດ້ຮັບ ອຳນາດຂອງຄະນະກຳມະການຈັດການ ຫຼື (ii) ຜ່ານການການຢັ້ງຢືນເປັນລາຍລັກອັກສອນຂອງພະນັກງານຂອງ ສູນການແພດ Broadlawns ໂດຍຕື່ມໃບສະໝັກສຳລັບການຊ່ວຍເຫຼືອວ່າ ຄົນເຈັບຢັ້ງຢືນກັບ ສູນການແພດ Broadlawns ທາງປາກເປົ່າກ່ຽວ ກັບການຄິດໄລ່ລາຍຮັບ. ໃນກໍລະນີທີ່ຄົນເຈັບບໍ່ສາມາດສະໜອງເອກະສານເພື່ອຢັ້ງຢືນລາຍຮັບໄດ້, ສູນການແພດ Broadlawns ຈະຮຽກຮ້ອງໃຫ້ມີການອະທິບາຍເຖິງເຫດຜົນທີ່ຄົນເຈັບບໍ່ສາມາດສະໜອງເອກະສານທີ່ຮຽກຮ້ອງ.

iii. **ປະເພດຄຳຢັ້ງຢືນລາຍຮັບທີ່ຍັງຄ້າງຢູ່:** ໃນລະຫວ່າງຂະບວນການຢັ້ງຢືນ, ໃນຂະນະທີ່ສູນການແພດ Broadlawns ກຳລັງເກັບ ຂໍ້ມູນທີ່ຈຳເປັນເພື່ອກຳນົດລາຍຮັບຂອງຄົນເຈັບ ພ້ອມທັງບັນທັດຖານການມີສິດອື່ນໆ, ຄົນເຈັບອາດຖືກປະຕິບັດໃນຖານະຄົນ ເຈັບທີ່ຊຳລະ ໂດຍສອດຄ່ອງກັບນະໂຍບາຍຂອງ ສູນການແພດ Broadlawns.

**F. ການມີສິດແບບສັນນິຖານເອົາເອງ**
ຄົນເຈັບທີ່ບັນລຸບັນທັດຖານການມີສິດແບບສັນນິຖານພາຍໃຕ້ພາກສ່ວນນີ້ອາດໄດ້ຮັບອະນຸມັດການຊ່ວຍເຫຼືອດ້ານການເງິນ ໂດຍບໍ່ຕື່ມໃບສະໝັກ ສຳລັບການຊ່ວຍເຫຼືອທາງການເງິນ. ເອກະສານທີ່ສະໜັບສະໜູນຄຸນສົມບັດຂອງຄົນເຈັບ ຫຼື ການມີສ່ວນຮ່ວມໃນໂຄງການທີ່ລະບຸໄວ້ໃນ ລາຍການຂ້າງລຸ່ມຕ້ອງໄດ້ຮັບ ແລະ ຮັກສາໄວ້ໃນໄຟຣ໌.

i. ການມີສິດແບບສັນນິຖານເອົາເອງອາດຖືກກຳນົດບົນພື້ນຖານສະພາບການຊີວິດສ່ວນບຸກຄົນທີ່ລວມເຖິງ:
   a. ການມີສິດໃນຕາປະທັບອາຫານ
   b. ການມີສ່ວນຮ່ວມໃນໂຄງການແມ່ຍິງ, ເດັກນ້ອຍແຮກເກີດ ແລະ ເດັກນ້ອຍ (WIC)
   c. ໂຄງການອາຫານສວາຍຂອງໂຮງຮຽນທີ່ໄດ້ຮັບເງິນອຸດໜູນ
   d. ການມີສິດສຳລັບໂຄງການຊ່ວຍເຫຼືອຂອງລັດ ຫຼື ທ້ອງຖິ່ນອື່ນໆ
   e. ຄົນບໍ່ມີບ້ານ ຫຼື ຄົນທີ່ໄດ້ຮັບການດູແລຈາກບ່ອນພັກອາໄສຂອງຄົນບໍ່ມີບ້ານ ຫຼື ຄຣີນິກຟຣີ
   f. B. ຄົນເຈັບເສຍຊີວິດໂດຍບໍ່ມີຊັບສິນທີ່ຮູ້ຈັກ

**G. ພະນັກງານຂອງໂຄງການ**
ພະແນກໃຫ້ຄຳປຶກສາດ້ານການເງິນຈະບໍລິຫານ ໂຄງການດູແລຊຸມຊົນຂອງ Broadlawns.
ຜູ້ຄວບຄຸມຈະຈ້າງພະນັກງານທີ່ຈຳເປັນເພື່ອດຳເນີນ ໂຄງການຢ່າງມີປະສິດຕິພາບ. ຜູ້ຄວບຄຸມຈະຮັບປະກັນວ່າ

ພະນັກງານທຸກຄົນທີ່ຢູ່ພາຍໃຕ້ການນຳພາຂອງເຂົາມີຄວາມຊຳນານ ແລະ ມີຄວາມຮູ້ໃນທຸກບັນຫາທີ່ກ່ຽວຂ້ອງກັບ ໂຄງການດູແລຊຸມຊົນຂອງ Broadlawns ພ້ອມທັງໂຄງການເຫຼົ່ານັ້ນທີ່ໜ່ວຍງານແຫ່ງລັດ ແລະ ລັດຖະບານກາງ ອື່ນໆ ໄດ້ນຳສະເໜີເພື່ອສະໜອງການດູແລດ້ານການແພດ ແລະ ໂຮງໝໍໃຫ້ກັບຜູ້ຮັບທີ່ມີຄຸນສົມບັດ.

ສຳລັບຊ່ວງໄລຍະທີ່ໜ້ອຍສຸດ ເຈັດ (7) ປີຕັ້ງແຕ່ມື້ລົງສະໝັກຂອງຄົນເຈັບ, ສູນການແພດ Broadlawns ຈະຮັກສາເອກະສານເຊິ່ງພຽງພໍຕໍ່ ການລະບຸຄົນເຈັບແຕ່ລະຄົນທີ່ໄດ້ຮັບອະນຸຍາດສະຖານະວ່າ ມີສິດສຳລັບໂຄງການດູແລຊຸມຊົນຂອງ Broadlawns, ລາຍຮັບຂອງຄົນເຈັບ, ວິທີການທີ່ໃຊ້ເພື່ອຢັ້ງຢືນລາຍຮັບຂອງຄົນເຈັບ ແລະ ບຸກຄົນທີ່ຖືກອະນຸຍາດໃຫ້ຮັບສະຖານະວ່າເປັນ ຄົນເຈັບທີ່ມີສິດໃນໂຄງການດູແລຊຸມຊົນ ຂອງ Broadlawns.

**H. ການບໍ່ລຳອຽງ**
ພະນັກງານທີ່ໄດ້ຮັບມອບໝາຍຈະຍອມຮັບ ແລະ ດຳເນີນງານການລົງສະໝັກເພື່ອການມີສິດທັງໝົດໃຫ້ກັບຜູ້ອາໄສທີ່ຂັດສົນຂອງເຂດປົກຄອງ Polk. ບໍ່ມີການຈຳແນກພາຍໃຕ້ນະໂຍບາຍເຫຼົ່ານີ້ທີ່ກ່ຽວຂ້ອງກັບການມີສິດ ຫຼື ຂໍ້ບັງຄັບຂອງການດູແລສຸຂະພາບ ດ້ວຍເຫດຂອງຊົນຊາດ, ສີຜິວ, ສາສະໜາ, ເພດ, ອາຍຸ, ຄວາມເສຍອົງຄະ ຫຼື ຊົນຊາດກຳເນີດ.

**I. ຜູ້ໃຫ້ບໍລິການທີ່ຖືກມອບອຳນາດ**
ຜົນປະໂຫຍດສຳລັບໂຄງການນີ້ຈະ **ເທົ່ານັ້ນ** ຕາມທີ່ໄດ້ລະບຸໄວ້ໃນສູນການແພດ Broadlawn; ການຊຳລະໃຫ້ກັບຜູ້ໃຫ້ບໍລິການ, ໂຮງໝໍ, ຮ້ານຂາຍຢາ ຫຼື ວິຊາການຄົນອື່ນໆແມ່ນ **ຖືກເກືອດຫ້າມ,** ນອກຈາກຖືກອະນຸຍາດໄວ້ສະເພາະໃນພາກສ່ວນອື່ນໆຂອງນະໂຍບາຍນີ້.

**J. ຜົນປະໂຫຍດທີ່ຄ້າຍຄື/ພາກສ່ວນທີສາມ**
ໂຄງການດູແລຊຸມຊົນຂອງ Broadlawns ແລະ ການຊ່ວຍເຫຼືອທາງການເງິນຂັ້ນຮ້າຍແຮງຈະສະໜອງຜົນປະໂຫຍດເປັນທຶນທາງສຸດທ້າຍ ເທົ່ານັ້ນ; ເຂດເຂດປົກຄຸມໃດກໍ່ຕາມ ແລະ ອື່ນໆທັງໝົດແມ່ນສຳຄັນຕໍ່ໂຄງການນີ້. ຜູ້ສະໝັກຈະບໍ່ມີສິດສຳລັບຜົນປະໂຫຍດຂອງໂຄງການນີ້ ໃນຂະນະທີ່ຖືກໂຈະ ຫຼື ຕັດສິດຈາກແຫຼ່ງພາກສ່ວນທີສາມ ຍ້ອນການສໍ້ໂກງ ຫຼື ການໃຊ້ໄປໃນທາງທີ່ຜິດ.

**K. ມີປະກັນໄພບໍ່ພຽງພໍ/ບໍ່ມີປະກັນໄພ**
ຄົນເຈັບໃນເຂດປົກຄອງ Polk ທີ່ມີ Medicaid ຫຼື ອົງກອນຈັດການການດູແລຂອງ Medicaid ເປັນແຫຼ່ງສະໜອງທຶນຫຼັກ ຫຼື ບໍ່ມີປະກັນໄພ ອາດມີສິດສຳລັບໂຄງການດູແລຊຸມຊົນ. ຄົນເຈັບທີ່ມີແຜນການປະກັນໄພເຫຼົ່ານີ້ຖືກກຳນົດວ່າຍາກຈົນ ພາຍໃຕ້ນະໂຍບາຍລາຍຮັບ ແລະ ລັບພະຍາກອນຂອງລັດ Iowa.

**L. ການສະໝັກ/ການແຈ້ງການ**
ການສະໝັກສຳລັບຜົນປະໂຫຍດຂອງໂຮງໝໍພາຍໃຕ້ໂຄງການນີ້ຈະຖືກຍອມຮັບໃນລະຫວ່າງຊົ່ວໂມງທຸລະກິດປົກກະຕິທີ່ຫ້ອງການໃຫ້ຄຳ ປຶກສາ ດ້ານການເງິນ ທີ່ສູນການແພດ Broadlawns.

ນະໂຍບາຍ ແລະ ວິທີດຳເນີນການຈະຖືກນຳໃຊ້ເພື່ອໃຫ້ພ້ອມໃນການກຳນົດການມີສິດ. ຜູ້ສະໝັກຈະໄດ້ຮັບແຈ້ງການເປັນລາຍລັກອັກສອນ ໃນການອະນຸມັດ ຫຼື ການປະຕິເສດ. ການແຈ້ງການປະຕິເສດຈະຕາມມາດ້ວຍເຫດຜົນສຳລັບການບໍ່ມີສິດ.

ສູນການແພດ Broadlawns ຈະຂໍຮ້ອງໃຫ້ຄົນເຈັບແຕ່ລະຄົນລົງສະໝັກສຳລັບ ໂຄງການດູແລຊຸມຊົນຂອງ Broadlawns ຫຼື ການຊ່ວຍເຫຼືອ ດ້ານການເງິນຂັ້ນຮ້າຍແຮງຕື່ມແບບຟອມການລົງສະໝັກ ("ໃບລົງສະໝັກສຳລັບການຊ່ວຍເຫຼືອ Broadlawns"). ໃບລົງສະໝັກສຳລັບ ການຊ່ວຍເຫຼືອອະນຸຍາດໃຫ້ມີການເກັບກຳຂໍ້ມູນໂດຍສອດຄ່ອງກັບລະບຽບຫຼັກການຂອງລັດ Iowa ພ້ອມທັງຂໍ້ມູນໃນການກຳນົດການມີສິດ ພາຍໃຕ້ໂຄງການຕ່າງໆທີ່ນອກເໜືອ ໂຄງການດູແລຊຸມຊົນ Broadlawns ແລະ ການຊ່ວຍເຫຼືອດ້ານການເງິນຂັ້ນຮ້າຍແຮງ. ຖ້າຄົນເຈັບບໍ່ປັບລວຕາມບັນທັດຖານຂອງການມີສິດ, ຄົນເຈັບອາດບໍ່ຖືກລະບຸວ່າ ມີສິດສຳລັບໂຄງການນີ້.

**M. ຄຳຮ້ອງຂໍສຳລັບການພິຈາລະນາຄືນໃໝ່**

ຖ້າຜູ້ສະໝັກຖືກປະຕິເສດຜົນປະໂຫຍດພາຍໃຕ້ ໂຄງການດູແລຊຸມຊົນ Broadlawns, ບຸກຄົນນັ້ນມີສິດທີ່ຈະອຸທອນຄຳຕັດສິນນັ້ນກັບຜູ້ຄວບຄຸມ ຂອງພະແນກໃຫ້ຄຳປຶກສາດ້ານການເງິນ.
ຜູ້ສະໝັກຈຳເປັນຕ້ອງອຸທອນເປັນລາຍລັກອັກສອນເພື່ອຍື່ນເລື່ອງໃຫ້ກັບຜູ້ຄວບ ຄຸມຂອງພະແນກໃຫ້ຄຳປຶກສາດ້ານການເງິນພາຍໃນ 10 ມື້ນັບແຕ່ມື້ຖືກປະຕິເສດ.

**N. ຄວາມລົ້ມເຫຼວທີ່ຈະຮ່ວມມື**

ຜູ້ສະໝັກມີຄວາມຮັບຜິດຊອບໃນການສະໜອງຂໍ້ມູນຈຳເປັນຕ່າງໆທີ່ຖືວ່າຈຳເປັນຕໍ່ນະໂຍບາຍນີ້ ແລະ ຕໍ່ຜູ້ໃຫ້ຄຳປຶກສາພາຍໃນ 30 ມື້ນັບແຕ່ມື້ລົງສະໝັກ; ຄວາມລົ້ມເຫຼວທີ່ຈະສະໜອງຂໍ້ມູນທີ່ຮ້ອງຂໍໃນເວລາກຳນົດຈະສົ່ງຜົນຕໍ່ການລົງສະໝັກທີ່ບໍ່ຄົບຖ້ວນ ແລະ ຈະກໍ່ໃຫ້ເກີດການປະຕິເສດ.

ຄວາມລົ້ມເຫຼວໂດຍຜູ້ສະໝັກທີ່ຈະປະຕິບັດຕາມ ບໍ່ວ່າໃນລັກສະນະໃດກໍຕາມ
ພ້ອມກັບການລົງສະໝັກທັງໝົດສຳລັບໂຄງການຊ່ວຍເຫຼືອແຫ່ງ ລັດຖະບານກາງ, ລັດ, ເຂດປົກຄອງ ຫຼື ອື່ນໆ
ເຊິ່ງເປັນເລື່ອງສົມເຫດສົມຜົນທີ່ບຸກຄົນດັ່ງກ່າວຈະມີຄຸນສົມບັດ ແລະ ເຊິ່ງເປັນເລື່ອງສຳຄັນໃນໂຄງ ການນີ້ຈະກໍ່ໃຫ້ເກີດການປະຕິເສດ.

ການສະເໜີຂໍ້ມູນຜິດໆໂດຍຜູ້ສະໝັກເພື່ອໃຫ້ມີຄຸນສົມບັດສຳລັບໂຄງການນີ້ ຈະກໍ່ໃຫ້ເກີດການປະຕິເສດ
ລວມເຖິງການປະຕິເສດໃນຂອບເຂດ ປົກຄຸມໃນອະດີດໃດໆກໍຕາມ.

ການສ້າງຂໍ້ມູນປອມຈະສົ່ງຜົນໃນການປະຕິເສດການຊ່ວຍເຫຼືອຂອງໂຄງການ.  ຫຼັງຈາກທີ່ຄົນເຈັບໄດ້ຮັບອະນຸຍາດວ່າມີສິດໃນ
ໂຄງການດູແລ ຊຸມຊົນຂອງ Broadlawns ແລະ ສູນການແພດ Broadlawns
ຄົ້ນພົບວ່າຂໍ້ມູນທີ່ສະໜອງໃນການລົງສະໝັກສຳລັບການຊ່ວຍເຫຼືອບໍ່ເປັນ ຄວາມຈິງ, ການຊ່ວຍເຫຼືອດ້ານການເງິນຈະຖືກຖອນ
ບົນພື້ນຖານຂອງຜົນບັງຄັບຍ້ອນຫຼັງ ແລະ/ຫຼື ປັດຈຸບັນ.

**O. ໄລຍະເວລາຂອງການມີສິດ**

ການອະນຸມັດຜົນປະໂຫຍດພາຍໃຕ້ໂຄງການນີ້ຈະບໍ່ເກີນສິບສອງເດືອນ.
ເງື່ອນໄຂຂອງຜົນປະໂຫຍດທີ່ຖືກອະນຸມັດຈະຂຶ້ນກັບສະພາບການທາງ ການເງິນ ແລະ ການແພດຂອງຜູ້ສະໝັກ.
ການຕໍ່ເຕີ່ມຜົນປະໂຫຍດແມ່ນມີໃຫ້ຫຼັງຈາກການກຳນົດວ່າ ເງື່ອນໄຂຂອງການມີສິດຖືກບັນລຸຕາມ ຂໍ້ມູນທີ່ໄດ້ຮັບອັບເດດ.
ໂຄງການນີ້ສະຫງວນສິດທີ່ຈະປະເມີນການມີສິດຂອງຜູ້ຮັບຄືນໃໝ່ ຖ້າມີການປ່ຽນແປງໃນລາຍຮັບໃນລະຫວ່າງ ໄລຍະ
ເວລາທີ່ອະນຸມັດການມີສິດ.  ຍິ່ງໄປກວ່ານັ້ນ, ໂຄງການສະຫງວນສິດທີ່ຈະປະເມີນການມີສິດຂອງຜູ້ຮັບຄືນໃໝ່
ເວລາທີ່ດູແລຄົນເຈັບໃນໂຮງໝໍ ຈຳເປັນເພື່ອກຳນົດການມີສິດຂອງຜູ້ຮັບສຳລັບໂຄງການອື່ນໆ.

**P. ສູນການແພດ Broadlawns ການແທກສາຍຕາສຳລັບເຮັດແວ່ນຕາ/ແວ່ນຕາ**

ສູນການແພດ Broadlawns ຈະສະໜອງການຊ່ວຍເຫຼືອດ້ານການເງິນສຳລັບແວ່ນຕາໃຫ້ກັບຜູ້ອາໄສທີ່ທຸກຍາກທາງການເງິນ ແລະ
ບັນລຸ ຕາມເງື່ອນໄຂສະເພາະ ຕາມທີ່ໄດ້ກຳນົດໄວ້ໃນ ໂຄງການດູແລຊຸມຊົນຂອງ Broadlawns...
(ສິ່ງນີ້ຍົກເວັ້ນຄົນໃດກໍຕາມທີ່ບໍ່ໄດ້ບັນລຸ ການກຳນົດໃນການເປັນຜູ້ອາໄສຂອງເຂດປົກຄອງ Polk.)

**Q. ຜູ້ສະໝັກທີ່ມີສິດ**

ມີພຽງຜູ້ອາໄສຂອງເຂດປົກຄອງ Polk ເທົ່ານັ້ນທີ່ບັນລຸເງື່ອນໄຂດ້ານລາຍຮັບ, ຊັບພະຍາກອນ, ການຢູ່ອາໄສ ແລະ ຄຣີນິກ
ຕາມທີ່ຈັດຕັ້ງຂຶ້ນໂດຍ ຄະນະກຳມະການຈັດການ ອາດມີສິດສຳລັບຜົນປະໂຫຍດພາຍໃຕ້ ນະໂຍບາຍຂອງໂຄງການດູແລຊຸມຊົນຂອງ
Broadlawns.

ການຄິດໄລ່ສະມາຊິກຄອບຄົວໂດຍກົງແມ່ນຈຳເປັນ.
ຄົນເຈັບທີ່ຮ້ອງຂໍການຊ່ວຍເຫຼືອພາຍໃຕ້ໂຄງການນີ້ຈຳເປັນຕ້ອງສະແດງການຢັ້ງຢືນຈຳນວນ ຄົນໃນຄົວເຮືອນຂອງຄົນເຈັບ.

ການຄິດໄລ່ຈຳນວນຂອງສະມາຊິກໃນຄົວເຮືອນສຳລັບການມີສິດຂອງຜູ້ໃຫຍ່ຈະສອດຄອງກັບບັນທັດຖານ Medicaid ຂອງລັດ Iowa. ສູນການແພດ Broadlawns ຈະລວມເຖິງຄົນເຈັບ, ຜົວເມຍຂອງຄົນເຈັບ ແລະ ຜູ້ອາໄສອື່ນໆທີ່ຖືກຕ້ອງຕາມກົດໝາຍ.

ການຄິດໄລ່ຈຳນວນສະມາຊິກໃນກໍລະນີການມີສິດຂອງຜູ້ຍັງບໍ່ທັນກະສຽນ ຈະສອດຄ່ອງກັບບັນທັດຖານ Medicaid ຂອງລັດ Iowa. ສູນການແພດ Broadlawns ຈະລວມເຖິງຄົນເຈັບ, ແມ່ຂອງຄົນເຈັບ ແລະ
ຜູ້ອາໄສອື່ນໆທີ່ຖືກຕ້ອງຕາມກົດໝາຍຂອງແມ່ຂອງຄົນເຈັບ ແລະ ພໍ່ຂອງຄົນເຈັບ ແລະ
ຜູ້ອາໄສອື່ນໆທີ່ຖືກຕ້ອງຕາມກົດໝາຍຂອງພໍ່ຂອງຄົນເຈັບ.

ຄົນເຈັບທີ່ໝົດອາຍຸ ທີ່ບໍ່ມີຊັບສິນອາດຖືວ່າ ບໍ່ມີລາຍຮັບເພື່ອຈຸດປະສົງຂອງການຄິດໄລ່ລາຍຮັບຂອງ ສູນການແພດ Broadlawns. ເອກະສານຂອງລາຍຮັບບໍ່ຈຳເປັນສຳລັບຄົນເຈັບທີ່ໝົດອາຍຸ ທີ່ບໍ່ມີຊັບສິນ.

ສະມາຊິກຄອບຄົວອາດຈຳເປັນໃນການສະໝັກສຳລັບການສະໜອງທຶນອື່ນໆແທນຄົນເຈັບທີ່ໝົດອາຍຸກ່ອນທີ່ຈະມີສິດສຳລັບ ໂຄງການດູແລຊຸມຊົນຂອງ Broadlawns.

ໃນຂະນະທີ່ກຳລັງຜ່ານຂະບວນການຢັ້ງຢືນໃນເຫດການທີ່ຜູ້ສະໝັກຕ້ອງການຢາຕາມແພດສັ່ງ,
ທາງເລືອກຈະຖືກນຳສະເໜີໃຫ້ກັບຄົນເຈັບ ເຊັ່ນ ການຊ່ວຍເຫຼືອທົ່ວໄປຜ່ານທາງພະແນກຄອບຄົວຊຸມຊົນ ແລະ ເຂົາະຊົນ.
ລູກຄ້າອາດໄດ້ຮັບສິດຈຳກັດເປັນເວລາຫຼາຍສຸດ 15 ມື້ຫຼັງຈາກການລົງສະໝັກເບື້ອງຕົ້ນ.

ຄົນເຈັບທຸກຄົນທີ່ຕ່ຳກວ່າ 19 ປີ ຕ້ອງສະໝັກຫົວຂໍ້ XIX ຫຼື ໂຄງການເດັກນ້ອຍມີສຸຂະພາບດີ ແລະ ປະພຶດດີຂອງລັດ Iowa (Hawk-I) ເພື່ອພິຈາລະນາການມີສິດສຳລັບ ໂຄງການດູແລຊຸມຊົນຂອງ Broadlawns. ການປະຕິເສດທີ່ຈະຈ່າຍເບ້ຍປະກັນໄພໃນໂຄງການ Hawk-I ຈະບໍ່ໄດ້ຮັບອະນຸຍາດໃຫ້ເປັນພື້ນຖານຂອງການມີສິດສຳລັບ ໂຄງການດູແລຊຸມຊົນຂອງ Broadlawns.

ມັນເປັນຄວາມຮັບຜິດຊອບຂອງຜູ້ສະໝັກທີ່ຈະລາຍງານການປ່ຽນແປງໃດກໍຕາມ ແລະ ທັງໝົດໃນລາຍຮັບຂອງຄົວເຮືອນ ແລະ ສະຖານະການປະກັນໄພພາຍໃນ 10 ມື້ທຸລະກິດ

**R. ບ່ອນຢູ່ອາໄສ**
ບຸກຄົນທີ່ບັນລຸນິຍາມຂອງການຢູ່ອາໄສສຳລັບເຂດປົກຄອງ Polk ຕາມທີ່ໄດ້ບັນລະຍາຍໄວ້ໃນນະໂຍບາຍນີ້ແມ່ນມີສິດສຳລັບການຊ່ວຍເຫຼືອດ້ານການເງິນ.

**S. ຊັບພະຍາກອນ**
ສູນການແພດ Broadlawns ຈະປະຕິບັດຕາມໂຄງການ Medicaid ຂອງລັດ Iowa ເພື່ອກຳນົດຂອບເຂດຊັບພະຍາກອນສຳລັບການມີສິດຢູ່ພາຍໃຕ້ໂຄງການດູແລຊຸມຊົນຂອງ Broadlawns ແລະ ການຊ່ວຍເຫຼືອທາງການເງິນຮ້າຍແຮງ.

**T. ການຊ່ວຍເຫຼືອດ້ານການເງິນຮ້າຍແຮງຂອງ Broadlawns**
ຖ້າຄ່າໃຊ້ຈ່າຍທັງໝົດຂອງຄົນເຈັບສຳລັບໄລຍະເວລາ 90 ມື້ເກີນ 10% ຂອງຍອດລາຍຮັບປະຈຳປີຂອງຄອບຄົວ,
ຄວາມດຸນດ່ຽງຂອງຄົນເຈັບ ອາດຖືກຫຼຸດລົງເຫຼືອ 10% ຂອງຍອດລາຍຮັບປະຈຳປີຂອງຄອບຄົວ ແລະ
ເງິນທີ່ຍັງເຫຼືອຢູ່ອາດຕັ້ງຂຶ້ນໃນແຜນການຊຳລະທີ່ຍອມຮັບໄດ້ ຜ່ານທາງພະແນກໃຫ້ຄຳປຶກສາດ້ານການເງິນຂອງ BMC.

ຖ້າຄອບຄົວມີຫຼາຍກວ່າ $10,000 ຊັບສິນຄ່ອງຕົວ ຄົນເຈັບກໍບໍ່ມີຄຸນສົມບັດສຳລັບ ການຊ່ວຍເຫຼືອດ້ານການເງິນຮ້າຍແຮງ ແລະ ຕ້ອງຮັບຜິດຊອບກັບຈຳນວນເງິນຄ້າງຄາໃນບັນຊີ.

**U. ຢາຕາມແພດສັ່ງ**

ໂຄງການດູແລຊຸມຊົນຂອງ Broadlawns
ຈະບໍ່ສະໜອງຢາຕາມແພດສັ່ງໃຫ້ກັບຄົນເຈັບທີ່ມີສິດໃນໂຄງການພາຍໃຕ້ຂໍ້ກໍານົດທີ່ບັນລະຍາຍຂ້າງລຸ່ມ.

1. ຢາຕາມແພດສັ່ງຕ້ອງບໍ່ເກີນການສະໜອງຄັ້ງດຽວໃນຈໍານວນ 30 ມື້ ແລະ ບໍ່ເກີນວັນທີໝົດອາຍຸຂອງການມີສິດ.
2. ຢາຕາມແພດສັ່ງແມ່ນຢູ່ໃນຕໍາລັບຢາຂອງໂຄງການດູແລຊຸມຊົນຂອງ Broadlawns.
3. ຢາຕາມແພດສັ່ງແມ່ນຖືກຂຽນຂຶ້ນໂດຍຜູ້ໃຫ້ບໍລິການທີ່ໄດ້ຮັບອະນຸມັດຂອງ ໂຄງການດູແລຊຸມຊົນຂອງ Broadlawns.
4. ຄົນເຈັບທີ່ຢູ່ໃນໂຮງໝໍ/ຄົນເຈັບພາຍໃຕ້ການສັງເກດ:
   ຜູ້ອາໄສທີ່ບໍ່ມີປະກັນໄພຂອງເຂດປົກຄອງ Polk ທີ່ເປັນບຸກຄົນລໍຖ້າ ສຸຂະພາບ ແລະ ຄວາມແຂງແຮງຂອງລັດ Iowa ຫຼື ທາງເລືອກສະຖານຕະຫຼາດແຫ່ງລັດ Iowa ຈະໄດ້ຮັບການສະໜອງທາງການຢາເປັນຈໍານວນ 10 ມື້
   ຜູ້ອາໄສທີ່ບໍ່ມີປະກັນໄພ ເຊິ່ງບໍ່ໄດ້ຢູ່ໃນເຂດປົກຄອງ Polk ຈະຕ້ອງມີໃບສະຫຼະສິດສໍາລັບຮ້ານຂາຍຢາໂດຍຜູ້ອໍານວຍການໃຫຍ່ດ້ານການແພດ
5. ຄົນເຈັບທີ່ບໍ່ໄດ້ຢູ່ໃນໂຮງໝໍ/ຄົນເຈັບໃນຄຣີນິກທີ່ກໍາລັງລໍຖ້າການດຸແລຊຸມຊົນເບື້ອງຕົ້ນອາດຈະມີສິດສໍາລັບຮ້ານຂາຍຢາ Broadlawns ຈົນເຖິງ 15 ມື້ ນັບຕັ້ງແຕ່ມື້ລົງສະໝັກ.

**V. ອຸປະກອນການແພດທີ່ທົນທານ (DME)**
ການບໍລິການເຫຼົ່ານີ້ແມ່ນຖືກຄຸ້ມຄອງພາຍໃຕ້ໂປຣແກຣມນີ້ເທົ່ານັ້ນ
ໃນເວລາທີ່ຜູ້ໃຫ້ບໍລິການທີ່ຖືກອະນຸມັດໄດ້ສະໜອງພາຍໃນສູນການແພດ Broadlawn.

**W. ການບໍລິການທີ່ບໍ່ຄຸ້ມຄອງ**
ສູນການແພດ Broadlawns ສະຫງວນສິດໃນການຈໍາກັດການບໍລິການທີ່ຂຶ້ນກັບນະໂຍບາຍຂອງໂຄງການດູແລຊຸມຊົນຂອງ Broadlawns.

**X. ບໍ່ມີຜົນໃນນະໂຍບາຍຂອງໂຮງໝໍອື່ນ**
ນະໂນບາຍການຊ່ວຍເຫຼືອນີ້ຈະບໍ່ປ່ຽນແປງ ຫຼື
ແກ້ໄຂນະໂຍບາຍອື່ນທີ່ກ່ຽວຂ້ອງກັບຄວາມພະຍາຍາມເພື່ອຮັບເອົາການຊໍາລະຈາກຜູ້ຊໍາລະພາກ ສ່ວນທີສາມ, ການຖ່າຍໂອນຄົນເຈັບ ຫຼື ການດູແລສຸກເສີນ.

**Y. ການແກ້ໄຂ**
ຄະນະກໍາມະການຈັດການຕ້ອງອະນຸມັດການແກ້ໄຂໃດກໍຕາມທີ່ເກີດຂຶ້ນກັບມາດຕະຖານທີ່ລະບຸໄວ້ໃນນະໂຍບາຍນີ້ກ່ອນການນໍາໃຊ້.

ອະນຸມັດໂດຍຄະນະກໍາມະການຈັດການ ໃນວັນທີ 18 ມິຖຸນາ 2019.

____________________________________
Jody Jenner, ປະທານກໍາມະການບໍລິຫານ